ຂຽນໂດຍ : ຣະຕະພອນ ສຸກສວັນ
28 décembre. 2003

# ເຈົ້າອ້າຍ (ຕອນນຶ່ງ)

- ທຸແມ່ !...ທຸແມ່ຂ້ານ້ອຍ !.. ມີສຽງດັງລັ່ນ ຂອງຄົນໃຊ້ໃນບ້ານ, ແລ້ວເຈົ້າຂອງສຽງກໍມາປາກົດຕົວ ຢູ່ທີ່ຫນ້າຫ້ອງ ຖົ້ມຕົວລົງນັ່ງພັບພຽບ ຣາຍງານຕໍ່ວ່າ :

- ເຈົ້າອ້າຍນໍາສນັ່ນ ຖືກຈັບມັດຕິດກັບຕົ້ນໄມ້ ແຄມຫົວຕະລິງ ຫນ້າບ້ານ !

- ເອົາອີກແລ້ວ ! ທຸແມ່ ຮີບຟ້າວລຸກ ຈາກການນອນຕະແຄງ ຂຶ້ນນັ່ງທັນທີ, ມືປ້າຍນໍ້າຄໍາຫມາກ ທີ່ຄ້ຽວແດງແຈ໊ ນັ້ນເກືອບລົ່ນເປາະ ໃນຂນະເອີ່ຍວ່າ ວ່າງກົ້.

- ເຂົາບອກວ່າ ຫາກທຸແມ່ ບໍ່ເອົາເງິນໄປໄຖ່, ເຂົາຊິບໍ່ຍອມປ່ອຍເຈົ້າອ້າຍ " ຄົນໃຊ້ໃນບ້ານ ຣາຍງານສຽງຫືດຫອບ... ສົງສານເຈົ້ານາຍຫນຸ່ມ ທີ່ຖືກມັດໄວ້ທາມກາງແດດ ຮ້ອນຈັ່ງຊີ້.

- ໂອ້ຍ ! ລູກຊາຍຂ້ອຍ ໄປເຮັດອີ່ຫຍັງໃຫ້ເຂົາ,ຈຶ່ງມັດລູກຊາຍຂ້ອຍແບບນີ້ " ທຸແມ່ຈົ່ມວ່າ ຫາກບໍ່ຖືເປັນເຣື່ອງໃຫຍ່, ຊຶ່ງມັນເປັນຮີດຄອງປະນີນີ້ເອງ, ທີ່ຊາວຫລວງພຣະບາງ ຈະສນຸກກັນຫລິ້ນຢ່າງເຕັມທີ່ ເມື່ອຮອດຍາມ ເດືອນຫ້າ ມາເຖິງ.

-ເປີ... ໄປນໍາໂອະ... ເຂົາຈັບອ້າຍສນັ່ນໄວ້ໃສ ? ທຸແມ່ຕຽມ ພ້ອມດຶງເງິນ ຢູ່ໃນກະຕ່າຄ້ຽວຫມາກ ມານັບກ່ອນ, ກ່ອນຈະພັນເປັນຂອດ ກ້ຽວຊຸກເຊື່ອງໄວ້ໃນຫົວສິ້ນ, ນໍາກົ້ນຄົນເຮືອນໄປ ທີ່ຫົວຕະລິ່ງຫນ້າບ້ານ...

ເຈົ້ານໍາຊນະ ວົງສນັ່ນ ຫລືເອີ້ນສັ້ນໆວ່າ " ເຈົ້ານໍາສນັ່ນ " ຊຶ່ງກໍາລັງເປັນເຈົ້າຫນຸ່ມເນື້ອຫອມ ມີຫນ້າທີ່ການງານ ເປັນ ພ.ຕ.ທ.ນາຍສາຣະວັດຫນຸ່ມ ວັຍຈະເຂົ້າ ໓໐ປີພໍດີ, ເຈົ້ານໍາສນັ່ນເປັນ ຄົນຮູບຮ່າງໃຫຍ່ສູງ ຜິວຂາວຜ່ອງໃສ ສົມເປັນລູກເຈົ້າລູກນາຍ ສົມເຊື້ອວົງເຈົ້າແທ້ ໆ, ຫນ້າຕາ ເຈົ້າຊູ້

ຄົນຄາຍ ມີສເນ່ພິລຶກ... ຮ່າງອັນໃຫຍ່ສູງ ຊຶ່ງປູ່ພາຍໃຕ້ເສື້ອຜ້າ ອັນຂາດຫວິ່ນ ດ້ວຍການກຸມ ຈິກຂອງໆສາວ ໆ, ຖືກມັດຕິດກັບກົກໄມ້ ດ້ວຍເຊືອກເຫນ້ນຫນ້າ, ທັງຮ່າງ ແລະ ໃບຫນ້າຖືກ ແປດເປື້ອນທາ ດ້ວຍຂີ້ມິ່ນຫມໍ້ ດຳເຫລື້ອມ ເປັນມັນວັບ ໆ ເມື່ອຖືກແດດຕ້ອງເຜົາ... ຄົງເຫັນພຽງ ແຕ່ໃນຕາຂາວ ໆ ກັບແຂ້ວອັນຂາວ ໆ ທີ່ລຽນຍາຍເປັນຮະບຽບ, ທຸແມ່ ຜູ້ວັຍເຂົ້າຫົກສິບປີ ຍ່າງເຂົ້າໄປໃກ້ ໆ ໃນຂນະສາວ ໆ ຢືນລ້ອມລັດເຈົ້ານຳສນັ່ນໄວ້ ຕັ້ງສີ່ຫ້າຄົນ.

- ເບິ່ງດູ... ຕົວດຳແມນແບບນີ້, ແມ່ນອ້າຍນຳສນັ່ນແທ້ບໍ່ ? ທຸແມ່ ວ່າຄ້າຍມີແຜ່ນ ສອດຫນ້າໄປມາ ຕາມຮ່າງສາວ ໆ ທີ່ຢືນລັດເຈົ້າອ້າຍໄວ້.

- ທຸແມ່ ເອົາເງິນມາໄຖ່ແລ້ວບໍ່ ? ບໍ່ຊັ້ນພວກຂ້ານ້ອຍ ຈະບໍ່ຍອມປ່ອຍເຈົ້າອ້າຍ " ສຽງສາວ ໆ ພາກັນຮຽກຮ້ອງ, ຫນຸ່ມເຈົ້າປ່ອຍຍິ້ມເຫັນແຂ້ວຂາວ ໆ ແລ້ວວ່າ :

- ບໍ່ຕ້ອງໆຕົກໃຈ... ບໍ່ຕ້ອງໆຕົກໃຈ... ທຸແມ່ມີເງິນຫລາຍ ພວກນ້ອງ ຈະຮຽກຮ້ອງ ຣາຄາສູງເທົ່າໃດກໍໄດ້ " ເຈົ້ານຳສນັ່ນຜູ່ໃຈດີ ຖືກມັດບໍ່ແລ້ວ ສເນີ ແດ່ສາວ ໆ ຮຽກຄ່າໄຖ່ແດ່ຕົນ.

- ເອົາລະ ວ່າກັນດີ ໆ... ຈະເສັຍເງິນຄ່າໄຖ່ທັງເທື່ອ... ແມ່ປາກຮູ້... ອ້າຍນຳສນັ່ນໄປເຮັດຜິດ ຫຍັງແກ່ພວກເຈົ້າ, ຈຶ່ງໄດ້ລົງໂທດແບບນີ້ " ທຸແມ່ ເອີ່ຍວ່າຕາມທຳນຽມ ຫາກວ່າເກັ່ງແທ້ ອາດຈະໄດ້ລູກຊາຍ ມາໂດຍບໍ່ໄດ້ ເສັຍເງິນ ສາວ ໆ ເບິ່ງຫນ້າກັນມະລອ່ມມະແລ່ມ, ທຸແມ່ຍິ້ມຢ່າງໃຈດີຕໍ່ວ່າ : "ນີ້... ອີ່ນ້ອຍ " ທຸແມ່ຫັນໄປວ່າຊີ້ຫນ້າ ກັບສາວນ້ອຍ ຄົນນຶ່ງ-ໂດຍຂ້ານ້ອຍ..." ສາວນ້ອຍຂານຮັບ

- ແມ່ປາກຖາມ... ຈັບມັດອ້າຍສນັ່ນຈັ່ງຊີ້... ຫລືວ່າອ້າຍສນັ່ນ...ໄປອັນນັ້ນ ອີ່ນ້ອຍຈັກບາດ, ຈັກເທື່ອແລ້ວ ?

-ໂອ໊ຍ !... ທຸແມ່ ! " ສາວນ້ອຍພາກັນແຕກຕື່ນ, ຮູ້ສຶກລະອາຍ ກັບຄຳເວົ້າຂອງທຸແມ່ອັນວາລີ, ປະກອບກັບ ຢູ່ຕໍ່ຫນ້າຕໍ່ຕາ ຫນຸ່ມເຈົ້າຜູ່ງາມອີກ, ຈຶ່ງພາກັນຟ້າວດຶງມື ຖືແຂນກັນ ປົບແລ່ນຫນີ

ຢ່າງໄວ, ແລ້ວທຸແມ່ອັນວາລີ ກັບຄົນໃນບ້ານ ກໍຮີບຟ້າວແກ້ເຊືອກອອກ ຈາກຮ່າງຂອງເຈົ້ານຳສນັ່ນ, ພາກັນກັບບ້ານໂດຍບໍ່ເສັຍເງິນຈັກກີບ.../

ຊົ່ວຊີຄັດພິວໃຫ້ຂາວ ອອກຈາກຂີ້ມີ່ນຫມໍ້ ໄດ້ກຳເຮັດເອົາຫນຸ່ມເຈົ້າ ຟອກສະບູ່ຕັ້ງຫລາຍເທື່ອຄ້ອນຂ້າງ ຍາກຊາ, ໃນທີ່ສຸດຮ່າງໃຫຍ່ສູງ ຜີວຂາວຜ່ອງໃສ ຈຶ່ງປາກົດອອກມາເດັ່ນແຈ້ງຈາກຮູບຮ່າງໃຫຍ່ດຳໃນວ່າງກີ້, ເຈົ້ານຳສນັ່ນ ໃຊ້ຜ້າເຊັດຕົວໄປມາ ຢູ່ໃນຫ້ອງນອນສ່ວນຕົວ, ແລ້ວກໍເຊັດພົມປຽກປອນນັ້ນ ຈົນສະເດັດເຫືອດແຫ້ງ.

ຫນຸ່ມເຈົ້າຜັດປ່ຽນເສື້ອຜ້າ ໃນຂນະຈະມີສຽງ ອຶກທຶກຄຶກໂຄມ, ສຽງສາດນ້ຳຫົດກັນຫລີ້ນຢູ່ຫົນທາງ ຫນ້າບ້ານ, ສຽງຮ້ອງໂອຍວາຍ ຂອງສາວ ໆ ພາກັນແລ່ນຫລີກ ຂັນນ້ຳດັງສນັ່ນ... ມີສຽງເຊີ້ງ ມາກັນເປັນຫມູ່ ຂັບຮ້ອງ ເປົ່າປີ່ສີຊໍ ດັງເປັນຂະບວນທັງ ສຽງອ້າຍບ່າວກັບນາງສາວ ຂັບເຊີ້ງຕອບກັນ, ທຸກຄົນຫນ້າດຳ ຈົນບໍ່ຮູ້ວ່າໃຜເປັນໃຜ... ພວກຜູ່ຊາຍເສື້ອຂາດຫວິ້ນກັນຫມົດ... ຫນຸ່ມເຈົ້າຖີ້ມກາຍ ຢືນຢູ່ປ່ອງຢ້ຽມ ໃຊ້ສາຍຕາເບິ່ງຜ່ານເດີ່ນກວ້າງຂ້າມຮົ້ວທີ່ມີຕົ້ນໄມ້ ປູກດົກຕັນຫນາແຫນ້ນ ໄປທີ່ຫົນທາງ, ທຸກຄົນກຳລັງ ເຊີ້ງລຳຟ້ອນແອະຟ້ອນແອ່ນຍ່າງຜ່ານ ເຂົ້າປະຕູຮົ້ວໂຮງຂອງ ເຈົ້ານຳຊນະວົງສນັ່ນ...

ຫນຸ່ມເຈົ້າປົບຫນີ ຈາກປ່ອງຢ້ຽມ ແລ່ນອອກຈາກຫ້ອງ ສັ່ງສຽງຮ້ອງໂອຍວາຍ ຕໍ່ຄົນໃນບ້ານ :

- ບອກວ່າ ຂ້ອຍບໍ່ຢູ່ບ້ານ ກໍແລ້ວກັນ "   ເທົ່ານັ່ນເອງ ຫນຸ່ມເຈົ້າກໍອັດປະຕູຂັງ ຢູ່ໃນຫ້ອງ.

- ເຈົ້າອ້າຍ... ເຈົ້າອ້າຍເອີຍ " ສຽງຂອງສັຕຣີ ໃນກຸ່ມຮຽກຮ້ອງຢູ່ກາງຫນ້າບ້ານ, ສຽງເສບ ສຽງຊໍ ຢຸດບັນເລງຊົ່ວ ຣະຍະ, ມີຄົນໃຊ້ໃນບ້ານ ແລ່ນຈາກຂັ້ນໃດ ເຮືອນສູງນັ້ນມາ...

- ເຈົ້າອ້າຍບໍ່ຢູ່... ເຈົ້າອ້າຍອອກໄປນຳເພື່ອນ ໆ ແຕ່ເຊົ້າ "

- ຕົວະກັນຕີ້... ເຈົ້າອ້າຍເອີຍ... ຫມູ່ຄູ່ມາຖາມສຸກສບາຍດີ... ຂໍກິນເຫລົ້າເອົາແຮງ... ຈະບໍ່ຕ້ອນຮັບບໍ່ ?   ສິ້ນຄໍາເວົ້າ ກໍເລີ້ມສຽງເສບ ສຽງຊໍກັນຂຶ້ນ, ຟ້ອນແອະຟ້ອນແອ່ນ ດັງຢູ່ໃນສວນຫນ້າໂຮງ ບ້ານອັນໃຫຍ່ໂຕ...

ທຸແມ່ ຊຶ່ງນອນຄ້ຽວຄໍາຫມາກ ຢູ່ກາງຫ້ອງ ນັ່ງຫລິ້ນ ຟ້າວລຸກຂຶ້ນ, ຈື່ຈໍາສຽງສັຕຣີ ຜູ່ເອີຍຮ້ອງໄດ້ດີ, ຄົນ ໆ ນີ້ ຮ້າຍເຫລືອຫລາຍ, ທຸກ ໆ ປີ ເປັນຫົວຫນ້າຄະນະ ນໍາພາຫມູ່ມ່ວນຊື່ນ, ທຸແມ່ລຸກຂຶ້ນໄປຊອກເຫລົ້າ ວິສກີຢ່າງດີ ອອກໄປ ຕ້ອນຮັບ.

- ອ້າຍນໍາສນັ່ນບໍ່ຢູ່, ອອກໄປນໍາເພື່ອນແຕ່ເຊົ້າ ໆ... ນີ້ເປັນເຫລົ້າ ຂອງອ້າຍນໍາສນັ່ນ ຝາກຖາມສຸກສບາຍ ແກ່ເພື່ອນທຸກ ໆ ຄົນ"     ທຸແມ່ວ່າ ຍ່າງຖືແກ້ວເຫລົ້າ ລົງຈາກຂັ້ນໃດເຮືອນມາ.

- ກໍດີ... ເຈົ້າອ້າຍບໍ່ຢູ່... ທຸແມ່ແທນກໄດ້ "  ວ່າແລ້ວສັຕຣີ ຫນ້າດໍາກໍລາກທຸແມ່ ມາເຂົ້າກຸ່ມ.

- ໂອ້ຍ !... ຢ່າເຮັດຫຍັງໃຫ້ໂອະ"  ທຸແມ່ຂໍຮ້ອງ ໃນຂນະສັຕຣີຫນ້າດໍານັ້ນ ໃຊ້ແກ້ມດໍາ ໆ ມາຣຸກຖູຍໄປມາ ໃສ່ແກ້ມທຸແມ່ ຈົນເປັນຮອຍດ່າງດໍາ, ສຽງໂຮ່ຮ້ອງດັງສນັ່ນ ຂຶ້ນຂອງຄົນໃນກຸ່ມ.

- ທຸແມ່ກໍຮຽນ ຕົວະ... ເອົາລູກຊາຍໄປເຊື່ອງໄວ້... ເອົານໍ້າມາ... ສົງທຸແມ່ກ່ອນ... ສົງແລ້ວທຸແມ່ກໍຈະ ຮູ້ສຶກສບາຍດີ... ຄັນຍຸກ !... ຄັນຍິກ !..." ສັຕຣີໃນກຸ່ມວ່າ.

-ໂອ້ຍ !...ໂອະບໍ່ເອົາແລ້ວ... ຄັນຍຸກຄັນຍິກ"  ທຸແມ່ວ່າຕອບ ເພາະເຂົ້າໃຈດີວ່າ  ນໍ້າຈະເອົາມາ ຫົດຕົນ, ຈະຕ້ອງເປັນນໍ້າ ແຊ່ຫມາກຄາຍ... ຈະເກີດຄັນເມື່ອຖືກຫົດ.

-ຢ່າຫົດໂອະ... ໂອະບໍ່ເອົາ... ໂອະຢູ່ບໍ່ໄດ້ ຈະເອົານໍ້າຫມາກຄາຍມາຫົດໂອະ "  ທຸແມ່ໃຊ້ມື ປົກຫົວແລ່ນ ຍ່ອງຍ່ອຍ, ສັຕຣີໃນກຸ່ມ ຄ້າຍຈະຂົ່ມຂູ່ເທົ່ານັ້ນ ຈະຫົດກໍບໍ່ຫົດຈັກເທື່ອ.

ເຈົ້ານໍາສນັ່ນເຫັນທ່າບໍ່ດີ ກໍເລີຍພາຕົວ ອອກຈາກຫ້ອງນອນມາ...

- ປ່ອຍທຸແມ່ສາ..." ສຽງທຸ້ມ ໆ ກັງວານດັງຂຶ້ນ, ທຸກຄົນຫັນຫນ້າໄປ ທີ່ຣະບຽງບ້ານ... ເຈົ້າອ້າຍນໍາສນັ່ນ ຍ່າງລົງ ຈາກຂັ້ນໃດເຮືອນມາ, ທຸກຄົນແລ່ນເຂົ້າໄປດຶງ ຫນຸ່ມເຈົ້າເຂົ້າຣ່ວມກຸ່ມ, ທຸແມ່ກໍເລີຍປອດພັຍ ຖີ້ມກາຍນັ່ງ ຢູ່ຕີນຂັ້ນໃດ ເບິ່ງພວກຂີ້ເຫລົ້າຫນ້າດໍາ ກໍາລັງອຸດຕະລຸດ ກັບລູກຊາຍຢູ່...

- ໂອ້ຍ !... ຕາຍຂ້ອຍແລ໊ວ... ເຕະຊີ ເຕະບັງ ເຕະຮັ່ງ ເຕະມິ " ທຸແມ່ຈົ່ມ ວ່າຕາເຫລືອກ, ລູກຊາຍຫາກໍຈະອາບນໍ້າ ລ້າງຕົວມາໃຫມ່ ໆ ກັບຄືນມາຫນ້າດໍາອີກຄັ້ງ, ເສື້ອຄໍກົມຖືກດຶງຂາດຫວີ້ນ...

- ກ໊ອກເຫລົ້າ... ເຫວີຍເຫລົ້າຈັກຫນ້ອຍ..." ແລ້ວຫນຸ່ມເຈົ້າ ກໍຖືກກຸມມີກຸມເທົ້າ, ຖືກງັດຄໍຈົນຫງາຍ, ສັຕຣີໃນກຸ່ມ ຣ່າຍເຫລົ້າລົງຄໍ... ມ່ວນຊື່ນຢ່າງສົມໃຈ ແລ້ວຫມູ່ຄູ່ກໍພາກັນ ແອະແອ່ນຟ້ອນລໍາລາກັບ ຈາກໂຮງບ້ານ ຂອງຫນຸ່ມເຈົ້າໄປ../

ອາບນໍ້າແຕ່ງຕົວອີກຄັ້ງ ກໍເປັນພາເຂົ້າແລງພໍດີ, ຫນຸ່ມເຈົ້າຍ່າງລົງຈາກເຮືອນ ມາເບື້ອງລຸ່ມຫລັງອາຫານ ແລ້ວຮຽບຮ້ອຍ, ຍ່າງເລາະ ຢູ່ໃນສວນອັນກວ້າງໃຫຍ່ງົດງາມ, ມີຕົ້ນດອກຈໍາປາສູງດົກເຕັມໄປດ້ວຍ ກີບດອກ ເບັ່ງບານ ສົ່ງກິ່ນຫອມອ່ອນ ໆ ຕາມຮົ້ວໄມ້... ເຂົາຍ່າງໄປຕາມທາງຫຍ້າຂຽວອ່ອນ ຮາບພຽງທອດເສັ້ນໄປຢຸດ ທີ່ແຄມຫນອງໃຫຍ່ຫລັງບ້ານ, ມີເປັດກັບຫ່ານລອຍຫລີ້ນເປັນຝູງ, ດອກບົວ ກໍາລັງບານຂຶ້ນ ເປັນຜືນຢູ່ກາງຫນອງນໍ້າ ສີບົວສະພັງຕາ.

ເຂົາຢືນງົງຢູ່ຊົ່ວຣະຍະ, ທຸກຢ່າງພາຍໃນ ບໍຣິເວນຫລືພາຍໃນບ້ານ ທີ່ອາສັຍຢູ່ຍັງຄົງເຫມືອນເດີມ, ເຮືອນໄມ້ ເສົາສູງ ປຸກແບບຫນ້າຮັກຫລັງນີ້ ມີອາຍຸຢືນຍາວ ມາໄດ້ເກືອບຮ້ອຍປາຍປີ, ມັນຈຶ່ງເປັນ ເຮືອນໄມ້ ແບບໂບຮານ ລາວໂດຍແທ້ ເມື່ອຜູ່ອາສັຍຢູ່... ຮັກສາບົວຣະບັດສ້ອມແປງ ເອົາໃຈໃສ່ທຸກຣະຍະ, ເຮືອນໄມ້ຫລັງນີ້ ຈຶ່ງຍັງຄົງ ແຫນ້ນຫນາໃຫມ່ຢູ່ສເມີມາ...

ບັນພະບຸຣຸດ ຜູ່ເປັນເຈົ້າຂອງໂຮງ ຫໍຫລັງນີ້ ມີປະວັຕສາດວ່າ ມັນເປັນໂຮງ ຫໍທີ່ປຸກຂຶ້ນສໍາຣັບເປັນເຮືອນຫໍ ຂອງ ເຈົ້າຊາຍຄໍາກ້ຽງ ແລະ ເຈົ້າຍິງຄໍາແກ້ວ... ເຈົ້ານໍາສນັ່ນ ຖອນໃຈຍາວ ໆ ເຊື້ອສາຍຂອງເຂົາ ທຸແມ່ບອກວ່າ : ເປັນເຊື້ອສາຍ ທີ່ມາຈາກເຈົ້າຊີວິດ ເມືອງຊຽງແມນ, ເປັນເມືອງທີ່ຕັ້ງ

ຢູ່ກົງຂ້າມແມ່ນ້ຳຂອງ ຕໍ່ໜ້າເມືອງ ຫລວງພຣະບາງນີ້ເອງ ທຸແມ່ ເຄີຍເລົ່າໃຫ້ຟັງວ່າ : ເຈົ້າຊາຍຄຳກ້ຽງ ແລະ ເຈົ້າຍິງຄຳແກ້ວ ເປັນອ້າຍນ້ອງກັນ ພໍ່ແມ່ດຽວກັນ ເປັນຣາຊໂອຣົດ ແລະ ຣາຊທິດາ ເຈົ້າຊີວິດ ເມືອງຊຽງແມນ... ສອງອ້າຍນ້ອງ ເກີດຮັກມັກກັນຂຶ້ນ ໂດຍທີ່ພຣະບິດາ ບໍ່ເຫັນຊອບ, ເພາະມີເຈົ້າຍິງ ອື່ນ ໆ ອີກຫລາຍອົງ ທີ່ຕັ້ງໃຈ ຫມາຍຫມັ້ນໄວ້ໃຫ້, ແຕ່ເຈົ້າຊາຍຄຳກ້ຽງ ກັບບໍ່ຊອບ... ກັບມາຊອບ ພໍກັບນ້ອງສາວຕົນເອງ... ເພາະຫລົງໄຫລໃນຄວາມງົດງາມ ຂອງຜູ້ເປັນນ້ອງ, ພຣະບິດາ ເກີດເບື່ອ ຫນ່າຍ... ເຖິງແມ້ນກະສັດ ອ້າຍນ້ອງຈະເອົາກັນໄດ້, ແຕ່ພຣະອົງ ກໍບໍ່ເພິ່ງປາຖນາແບບນີ້ ຈຶ່ງເກີດຜິດ ຖຽງກັນຂຶ້ນ ບໍ່ລົງຮອຍ ເຈົ້າຊາຍຄຳກ້ຽງ ພາເຈົ້າຍິງອົງນ້ອງ ຊຶ່ງໄດ້ສົມສູ່ເສັຍ ໃຫ້ກັນແລະກັນແລ້ວ... ພາເຈົ້າຍິງ ຫນີຂ້າມນ້ຳ ມາປຸກໂຮງຫໍ ຢູ່ທີ່ຫລວງພຣະບາງ.

ຄິດເຖິງຕອນນີ້ ກໍເຮັດເອົາຫນຸ່ມເຈົ້າຖອນໃຈ... ອາດິດຮັກຣະຫວ່າງສອງອ້າຍນ້ອງ ມັນກໍ ຫນ້າເຫັນໃຈ... ເມື່ອພຣະບິດາບໍ່ເຫັນຊອບ ເຖິງກັບສລະຣາຊບັນລັງ ພາກັນຫນີມາຢູ່ ຫລວງພຣະ ບາງ, ແລ້ວເຈົ້າຊາຍຄຳກ້ຽງ ກໍບໍ່ກັບໄປ ທີ່ວັງເມືອງຊຽງແມນ ຫລັງຈາກພຣະບິດາໄດ້ສວັນຄົດໄປ... ເຈົ້າຊາຍຄຳກ້ຽງ ຈຶ່ງຫັນມາຄ້າຂາຍ ກ່ຽວກັບຄ້າເງິນຄ້າຄຳ, ຄ້າຊ້າງ, ຄ້າມ້າໄປເມືອງນັ້ນ ເມືອງນີ້... ຮັ່ງມີ... ມີມໍຣະດົກຕົກທອດ ເຖິງເຊັ່ນລູກເຊັ່ນຫລານ.

ເມື່ອເປັນດັ່ງນີ້ແລ້ວ ທັງສອງອ້າຍນ້ອງເຈົ້າຈຶ່ງ ວ່າໄຫວ້ນຳກັນ ຖ້າຫາກມີລູກກົກ ເປັນຊາຍ ກໍບໍ່ຂໍເອົາລູກອີກ ຖ້າມີອີກເປັນຍິງ ກໍບໍ່ຂໍໃຫ້ລ້ຽງຮ່ວມກັນ ໄວ້ໃນບ້ານເພາະຢ້ານ ປວັຕສາຕຈະຊ້ຳ ຮອຍ, ແຕ່ກໍຫນ້າແປກ ເຈົ້າປູ່ທວດ ລົງມາເຖິງປັຈຸບັນ ລ້ວນແລ້ວແຕ່ເປັນລູກຊາຍ ແລະ ເປັນຊາຍ ດຽວທັ້ງນັ້ນ.

ດ້ວຍເຫດນີ້ ເຂົາຈຶ່ງເປັນລູກຊາຍດຽວໃນຄອບຄົວ ແຕ່ຄວາມມີລູກຊາຍດຽວ ກັບຫງຽບ ເຫົງາ ຫລັງທີ່ບິດາເສັຍຊີວິດໄປ ເຂົາແລະທຸແມ່ ຈຶ່ງຮູ້ສຶກວ່າ ໂຮງບ້ານຫລັງນີ້ ມັນຊ່າງເສົ້າ ເຫລືອເກີນ.../

ເຊີນອ່ານຕອນຕໍ່ໄປ...

**ຂຽນໂດຍ : ທະຕະພອນ ສຸກສວັນ**

28 décembre. 2003

# ເຈົ້າອ້າຍ (ຕອນສອງ)

ມື້ນີ້ ເປັນມື້ສັງຂານຂຶ້ນ... ເປັນມື້ສຳຄັນ... ເປັນມື້ຕ້ອນຮັບປີໃຫມ່, ສັງຂານໃຫມ່, ພຸທສັກຣາຊໃຫມ່ ໒໕໑໓-ຄ.ສ.໑໙໗໐...

ມີແສງສວ່າງສໄວ ພາຍໃຕ້ໃນເດີ່ນອັນກວ້າງໃຫຍ່ ບໍຣິເວນພຣະຣາຊວັງ, ຊຶ່ງມີພິທີສົມມາບາສີຢ່າງໃຫຍ່ໂຕ... ມີເຊື້ອວົງເຈົ້າ, ແຂກທີ່ເຊີນ ລ້ວນແຕ່ເປັນຂຸນມຸນນາຍ ຂ້າຣາຊການຊັ້ນສູງ.

ສຽງຣະນາດຕັ່ງອ້ອຍອີ່ງ ກຳລັງມີການຟ້ອນນາຕສິນ ເຣື່ອງພຣະຣັກພຣະຣາມ ນາງສີດາ ຫນຸ່ມເຈົ້ານຳຊນະ ວົງສນັ່ນ ກຳລັງນັ່ງໆຊົມການຟ້ອນນາຕສິນ... ເຂົາເບິ່ງນັຍຕາ ຕະລຶງຄ້າງໄປທີ່ສາວນ້ອຍ ຜູ່ສວມຊຸດຟ້ອນ ອັນເປັນປະກາຍເຫລື້ອມ, ສວມມົງກຸດ ປ່ອຍຜົມຍາວສແດງເປັນນາງສີດາ ຜູ່ງົດງາມ.

- ນາງສີດາປີນີ້" ເຂົາພຶມພຳ, ທຸກໆປີ ຈະຄັດເລືອກສາວງາມ ຈາກໂຮງຮຽນຕ່າງໆມາເອບຝຶກຟ້ອນ, ຜູ່ງາມທີ່ສຸດ ຈະຕ້ອງຖືກເລືອກ ເປັນນາງສີດາ... ທຸກໆປີ ທີ່ຜ່ານມາ ຫນຸ່ມເຈົ້າ ບໍ່ເຄີຍໃຫ້ຄວາມສົນໃຈ... ແຕ່ມາປີນີ້... ເຂົາພົບວ່າ ຊ່າງງົດງາມ ຖືກໃຈເຂົາພິລຶກ, ໃບຫນ້ານັ້ນແຊ້ມຊ້ອຍ ອ່ອນຫວານ, ອິຣິຍະບົດໂຍກຍ້າຍ ບາດກ້າວລຳແຂນໄປມາ ຕາມຈັງຫວະດົນຕຣີ, ຢ່າງນີ້ມນວນລະມຸນລະມັຍ...

ເຫມືອນເຂົາຈະເກັບ ເອົາມາເພີ້ຝັນເຖິງນາງສີດາ ນ້ອຍຄົນນັ້ນ, ຕິດຕາຢູ່ຕລອດຣະຍະໃນການຈະຫລັບຕາ ລົງຄັ້ງໃດ... ຮ່າງນັ້ນຈຶ່ງນອນຫັນໄປຫັນມາບໍ່ເປັນສຸກ.../

//////////////////////////

- ນວນຈັນເອີຍ... ເອົາສົ້ມໝູສິບຫໍ່ ໄປໃຫ້ທຸແມ່ໃນໂຮງໃຫ້ແມ່ແດ່..." ສຽງຂອງປ້າຄຳແພງ ແມ່ຄ້າຂາຍສົ້ມໝູ ຝີມືດີ ໂດຍສເພາະທຸແມ່ວັນວາລີ ກໍ່ເປັນຂາປະຈຳເລື້ອຍ ໆ.

- ອີ່ແມ່... ເຮົາບໍ່ເຄີຍໄປບ້ານທຸແມ່ຈັກເທື່ອ... ເຮົາບໍ່ກ້າເຂົ້າໄປ ໃນເຮືອນໃຫຍ່ໆນັ້ນ..." ລູກສາວ ຕອບ, ໂຮງຂອງທຸແມ່ ບໍ່ໄກຈາກບ້ານນີ້ ໄປເທົ່າໃດ ຍ່າງອຶດໃຈດຽວກໍຮອດ.

- ແມ່ບອກໄປກໍໄປ..." ປ້າຄຳແພງ ສອດໜ້າອອກມາຈາກມຸ້ງ... ພົມຫຍຸ້ງເຫຍີງ... ຄືນນີ້ຫລິ້ນ ໄພ້ໝົດແຈ້ງ ບໍ່ມີແຮງ ຈະເອົາສົ້ມໝູ ໄປໃຫ້ທຸແມ່ ຕາມຄຳສັ່ງ.

ສາວນ້ອຍນັບສົ້ມ ໃສ່ກະຕ່າຄົບສິບຫໍ່ ແລ້ວກໍລົງຈາກເຮືອນໄປ... ຍ່າງໄປຕາມເສັ້ນທາງ ນ້ອຍ ໆ ຕາມຊອກ ຣະຫວ່າງບ້ານຜູ່ຄົນ, ໃກ້ຈະຮອດກຳແພງ ໂຮງບ້ານທຸແມ່... ມີສຽງອ້າຍບ່າວ ພາກັນຖືກະບວຍນ້ຳ ແລ່ນນຳກົ້ນ ສາວນ້ອຍນວນຈັນ.

- ຂໍຫົດນ້ຳ... ຂໍຫົດນ້ຳໃຫ້ນາງສິດາປີນີ້ແດ່..." ສາວນ້ອຍນວນຈັນຕົກໃຈ... ເຖິງບຸນຈະຜ່ານມາ ໄດ້ເກືອບອາທິດ... ແຕ່ກໍຍັງມີຜູ່ຫລິ້ນຢູ່, ໂດຍສະເພາະຕົວເອງ ທີ່ມີຄົນຕ້ອງການຫົດອາບໃຫ້, ເພາະຄວາມງາມ ແລະ ມີຊື່ ປີນີ້ໄດ້ໄປຟ້ອນໃນວັງ ເປັນນາງສິດາອີກ.

- ໂອ້ຍ...! ບໍ່ເອົາແລ້ວ...! ສາວນ້ອຍລົບຫລີກ ແລ່ນປານຕາຍ ພົ້ນເຂົ້າປະຕູໂຮງບ້ານທຸແມ່ ແຕ່ນັ້ນກໍບໍ່ທຳໃຫ້ ສາວນ້ອຍນວນຈັນ ລົບຫລີກກະບວຍນ້ຳ ອ້າຍບ່າວສອງໆຄົນນັ້ນໄດ້... ສາວນ້ອຍນວນຈັນ ໜ້າແດງ ຄ້າຍຢາກຈະຮ້ອງໄຫ້ ເຄື່ອງປຽກໝົດຈັ່ງຊີ້ ຈະຂຶ້ນບ້ານທຸແມ່ ໄດ້ຈັ່ງໃດ.

ຊ່າງບັງເອີນແທ້ ໆ, ເຫດການທຸກຢ່າງ, ໜຸ່ມເຈົ້ານຳສນັ່ນຢືນເຫັນເຫດການພໍດີ, ເຂົາຢືນຢູ່ແຄມຮົ້ວ ໄດ້ກ້ອງໆກົກຈຳປາ ບໍ່ຫ່າງໆໄກຈາກທີ່ສາວນ້ອຍຢືນຢູ່... ສາວນ້ອຍຫ້າງທ່າ ຈະຫັນກາຍກັບອອກຈາກໂຮງ.

- ດຽວ... ຜູ່ສາວ..." ໜຸ່ມເຈົ້າຮ້ອງຫ້າມ ກ້າວຂາເຂົ້າມາຢຸດຢູ່ໃກ້ ໆ... ເໝືອນເຮັດໃຫ້ຫົວໃຈເກືອບຢຸດເຕັ້ນ... ສາວນ້ອຍໜ້າຫວານຄົນນີ້... ເປັນສາວນ້ອຍ ຜູ່ທີ່ເຂົາເລີ້ມລັກມັກຢູ່ງຽບ ໆ.

- ເຈົ້າອ້າຍ !... ສາວນ້ອຍຂານຊື່ເຂົາຢ່າງຕົກໃຈ, ເໝືອນເຂົາບໍ່ຈຳເປັນ ຈະແນະນຳຕົວເອງ ໃຫ້ຮູ້... ເຂົານີ້... ໃຜ ໆ ກໍຮູ້ດີ ທົ່ວທຸກຈອກມຸມແຈ... ໂດຍສະເພາະສາວ ໆ... ໜຸ່ມເຈົ້າຍີ້ມຮັບ ເບິ່ງຮ່າງທີ່ປຽກປອນ ດວ້ຍນ້ຳປະມານສອງກະບວຍ, ໃນມືສາວນ້ອຍ ຖືກະຕ່າບັນຈຸຫລົ້ສົ້ມໝູ.

- ຂະ... ຂະນ້ອຍ... ເອົາສົ້ມໝູມາໃຫ້ທຸແມ່..." ເພາະຄິດຢ້ານ ຫາກເຈົ້າອ້າຍ ບໍ່ຮູ້ຈຸດປະສົງການ ມາຂອງຕົນດຽວຈະຫາວ່າ ມາກ້າວກ່າຍ ເຂົ້າປະຕູຮົ້ວໂຮງບ້ານ ໂດຍບໍ່ໄດ້ຮັບອະນຸຍາດ...

ໜຸ່ມເຈົ້າຍັງຫລຽວເບິ່ງ ສາວນ້ອຍນັຍຕາເພີນ ແລະ ຊື່ນຊົມ.

- ເຈົ້າອ້າຍ...ຂະນ້ອຍຂໍຝາກສົ້ມໝູນີ້ ກັບເຈົ້າອ້າຍເລີຍ..."

- ອ້າວ... ຈະບໍ່ຂຶ້ນໄປໃນບ້ານ...ຢ່າງນ້ອຍ... ເຈົ້າກໍຕ້ອງ ຄອຍເອົາເງິນຄ່າສົ້ມໝູ ແລະ ກະຕ່າກັບໄປ..."

- ເຄື່ອງຂະນ້ອຍປຽກໝົດແບບນີ້..." ສາວນ້ອຍວ່າ ເບິ່ງຕົວເອງແລ້ວ ກໍທຳທ່າມະລ່ອມມະແລ່ມ. ບໍ່ຮູ້... ບໍ່ເຂົ້າໃຈໃນແວວຕາຂອງເຈົ້າອ້າຍ... ເປັນຫຍັງຈຶ່ງເບິ່ງໃດ້ເບິ່ງດີ ອີ່ຫຍັງກໍບໍ່ຮູ້ ?

- ອື໋ມ... ບໍ່ເປັນຫຍັງ... ຫາກເຈົ້າບໍ່ຂຶ້ນ ... ຂ້ອຍຈະເອົາສົ້ມໝູນີ້ໄປໃຫ້ທຸແມ່... ເຈົ້າສັນຍາ... ວ່າຈະຕ້ອງຖ້າຂ້ອຍຢູ່ລຸ່ມນີ້... ຂ້ອຍຈະນຳເອົາເງິນ ແລະ ກະຕ່າລົງມາໃຫ້ເຈົ້າ..."

- ໂດຍ... ຂະນ້ອຍຂອບໃຈເຈົ້າອ້າຍທີ່ກະຣຸນາ..." ສາວນ້ອຍໂລ່ງອົກ, ຫນຸ່ມເຈົ້າໃຊ້ມືໄປຖືກະຕ່າ ນັ້ນໄວ້ໃນກຳມື, ແຕ່ກໍຍັງຄົງເບິ່ງ ໃບຫນ້າຫວານ ໆ ຂອງສາວນ້ອຍ ຢູ່ນານຊົ່ວຣະຍະ.

- ເຈົ້າອ້າຍ... ເບິ່ງຂະນ້ອຍເຮັດຫຍັງ...? ກໍຂະນ້ອຍບອກແລ້ວ... ຂະນ້ອຍເຂົ້າມາໃນຮົ້ວ ໂຮງບ້ານເຈົ້າອ້າຍ ເພາະເອົາສົ້ມຫມູມາໃຫ້ທຸແມ່..." ສາວນ້ອຍບອກອີກຄັ້ງ ຢ້ານເຈົ້າອ້າຍຈະຍັງສົງສັຍ.

- ບໍ່... ຂ້ອຍບໍ່ໄດ້ວ່າເຈົ້າເລີຍ... ເຈົ້າຈະເຂົ້າມາ ໃນຮົ້ວບ້ານຂອງຂ້ອຍຈະຍາມໃດ... ເວລາໃດກໍໄດ້... ແຕ່ຂ້ອຍເບິ່ງເຈົ້າ... ເພາະເຈົ້າຜູ່ດີຜູ່ງາມ..." ຫນຸ່ມເຈົ້າວ່າໄດ້ຕໍ່ຫນ້າຕໍ່ຕາ... ສາວນ້ອຍຫນ້າແດງ... ບໍ່ຮູ້ຈະວາງທ່າທີຈັ່ງໃດ... ເມື່ອຖືກຍົກຍ້ອງ ຈາກຫນຸ່ມໃຫຍ່ ຜູ່ມີຊື່ມີສຽງ.

- ເຈົ້າອ້າຍວ່າຍ້ອງຍໍຂະນ້ອຍແບບນີ້... ດຽວສາວ ໆ ຈະອິດສາຂະນ້ອຍ..." ສາວນ້ອຍວ່າຕາມປະສາ ແຕ່ກໍຮູ້ສຶກ ຕົກໃຈຫວາບ !... ບໍ່ຮູ້ວ່າຕົວເອງເວົ້າຖືກດີແລ້ວບໍ່ ? ໃນຄຳວ່າງກີ້.

-ອ່າວ... ແລ້ວເຈົ້າບໍ່ດີໃຈຫວະ... ເຈົ້າກໍອາດຢູ່ນຶ່ງ ໃນຈຳນວນສາວ ໆ ພວກນັ້ນ..." ຫນຸ່ມເຈົ້າວ່າໄດ້ວ່າເອົາ.
- ໂອ້ຍ !... ເຈົ້າອ້າຍ... ຂະນ້ອຍບໍ່ອາດເອື້ອມເຖິງປານນັ້ນ... ລູກສາວແມ່ປ້າຂາຍສົ້ມຫມູ... ຊິກ້າ ມາລັກ ມັກເຈົ້າອ້າຍ..." ສາວນ້ອຍວ່າ... ເຈົ້າອ້າຍຫົວສຽງຫລັງ... ຕິດໃຈໃນນ້ຳຄຳ...

- ຊ່າງເວົ້າແບບນີ້... ມີແຟນແລ້ວແມ່ນບໍ່ ? ຫນຸ່ມເຈົ້າຖາມທ່າທາງສົນໃຈພິລຶກ... ສາວນ້ອຍຄື້ວຫຍຸ້ງ... ເບິ່ງເຈົ້າອ້າຍນັຍຕາສົງສັຍ, ສາວນ້ອຍຫາກໍມາຮູ້ມື້ນີ້ ໆ ເອງ... ເຈົ້າອ້າຍເປັນຄົນຊ່າງລົມ ບໍ່ຖືຕົວເລີຍຈັກເມັດ... ຄວາມມີຊື່ສຽງຂອງເຈົ້າອ້າຍ... ສາວນ້ອຍຄິດວ່າ... ເຈົ້າອ້າຍຄົງຖືຕົວ ເວລາປາກເວົ້າ ຄົງຕິດປີກບິນເປັນແນ່ແທ້...

- ຂະນ້ອຍບໍ່ກ້າມີແຟນດອກ..." ສາວນ້ອຍບອກຕາມຊື່.

- ອື້ວ... ເປັນຫຍັງ ?

- ແມ່ເຄີຍເວົ້າວ່າ ຫາກຂະນ້ອຍ ລັກມີແຟນແຕ່ນ້ອຍ ໆ ຈັ່ງຊີ້... ແມ່ຈະເອົາສົ້ມຫມູຟາດຫົວ..."

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ